## ປະກາດຮັບສະໝັກພະນັກງານ 1 ຕຳແໜ່ງ

**ພາບລວມ**

ສະມາຄົມພັດທະນາກະສິກຳ ແລະ ສິ່ງແວດລ້ອມແບບຍືນຍົງ (SAEDA) ໂດຍການຮ່ວມມືລະຫວ່າງ ອົງການ ອົງການແຄຣ໌ ປະຈຳ ສປປ ລາວ (Care in Lao ) ເພື່ອຈັດຕັ້ງປະຕິບັດໂຄງການ "ການສ້າງຄວາມເຂັ້ມແຂງໃນຊຸມຊົນເພື່ອການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດແບບມີສ່ວນຮ່ວມ" (the Empowering Communities through Participatory Climate Action (WeAct)) ໂດຍ ເສີມຂະຫຍາຍ ແລະ ເສີມສ້າງການມີສ່ວນຮ່ວມຂອງຊຸມຊົນ ແລະ ໂອກາດຂອງກະສິກຳແບບຍືນຍົງ ໃນເມືອງລອງ, ແຂວງຫຼວງນໍ້າທາ ມີຄວາມຕ້ອງການຮັບພະນັກງານ " **ສົ່ງເສີມກະສິກຳ" 01** ຕຳແໜ່ງ ປະຈຳໂຄງການຢູ່ຫ້ອງການເມືອງລອງ, ແຂວງຫຼວງນໍ້າທາ ໄລຍະເວລາ ສັນຍາ **28** ເດືອນ.

**ພາລະໜ້າທີ່ຫຼັກ**:

- ສ້າງແຜນກິດຈະກຳປະຈຳປີ, ປະຈຳໄຕມາດ, ປະຈຳເດືອນ ແລະ ແຕ່ລະກິດຈະກຳ ຮ່ວມກັບຄູ່ຮ່ວມງານຂອງໂຄງການ;
- ຈັດຕັ້ງປະຕິບັດ, ສົ່ງເສີມ ແລະ ພັດທະນາກິດຈະກຳດ້ານກະສິກຳ ແລະ ກິດຈະກຳອື່ນໆຂອງໂຄງການ ໃນແຂວງ; ເມືອງ ແລະ ບ້ານເປົ້າໝາຍໝາຍຂອງໂຄງການ;
- ປະສານງານກັບລະຫວ່າງສະມາຄົມ SAEDA ວຽງຈັນ, ແລະ ພາກລັດຂັ້ນແຂວງ, ເມືອງ, ບ້ານ ແລະ ອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ;
- ຕິດຕາມ ກວດກາ ແລະ ຊຸກຍູ້ວຽກງານຂອງໂຄງການທີ່ຮັບຜິດຊອບ;
- ລາຍງານການຈັດຕັ້ງກິດຈະກຳ ປະຈຳເດືອນ ແລະ ປະຈຳປີ ໃຫ້ສາຍງານ ແລະ ຄູ່ຮ່ວມງານຕາມຄວາມຕ້ອງການ.

**ຄຸນນະວຸດ ແລະ ມາດຖານຕ້ອງການ:**

- ຮຽນຈົບປະລິນຍາຕີ ຫຼື ທຽບເທົ່າ ດ້ານກະສິກຳ ແລະ ອື່ນໆທີ່ກ່ຽວຂ້ອງ;
- ສັນຊາດລາວ ມີອາຍຸລະຫວ່າງ 25-40 ປີ;
- ມີປະສົບການເຮັດວຽກດ້ານກະສິກຳ ແລະ ພັດທະນາຊົນນະບົດມາກ່ອນຫຼາຍກວ່າ 03 ປີ;
- ເຄີຍເຮັດວຽກນຳພາກລັດ ຫຼື ອົງການຈັດຕັ້ງສາກົນ ຫຼື ສະມາຄົມ;
- ສາມາດນຳໃຊ້ຄອມພິວເຕີ : Word, Excel, Power point, Publisher, ອິນເຕີເນັດ ແລະ ອື່ນໆ;
- ສາມາດເວົ້າ ແລະ ຂຽນພາສາອັງກິດໄດ້ດີພໍສົມຄວນ;
- ຖ້າແມ່ນຄົນມີຖິ່ນຖານ ຢູ່ເມືອງລອງ ຈະພິຈາລະນາເປັນພິເສດ;
- ມີສຸຂະພາບແຂງແຮງດີ ແລະ ສາມາດເຮັດວຽກໃນເຂດຫ່າງໄກສອກຫລີກໄດ້;
- ມີຄວາມຮັບຜິດຊອບສູງ, ມີຫົວຄິດປະດິດສ້າງ, ກະຕືລືລົ້ນໃນການຮຽນຮູ້ເອົາບົດຮຽນອັນໃໝ່, ມີຄວາມອົດທົນ, ການເຮັດວຽກເປັນທີມໄດ້ດີ ແລະ ຫຼັກການພື້ນຖານຂອງວຽກງານພັດທະນາ.
- ຈະຕ້ອງມີໃບອະນຸຍາດຂັບຂີ່ລົດຈັກ;
- ສາມາດເລີ່ມເຮັດວຽກໄດ້ພາຍໃນກາງເດືອນ ກາງ 9/2023.

ທ່ານໃດສົນໃຈສາມາດ ຍື່ນຄຳຮ້ອງສະໝັກຂຽນດ້ວຍຕົວເອງ (ລະບຸຄວາມຕ້ອງການເງິນເດືອນ) ພ້ອມດ້ວຍ ຊີວະປະຫວັດ, ໃບປະກາດ, ໃບຜ່ານງານ, ໃບແຈ້ງໂທດ, ອັດປື້ມສຳມະໂນຄົວ/ບັດປະຈຳຕົວ ແລະ ເອກະສານອື່ນໆ ທີ່ກ່ຽວຂ້ອງມາທີ່. ຂໍໃຫ້ສະແກນເປັນ 1 ຟາຍ ເປັນ PDF ແລ້ວ ສົ່ງມາທາງອີເມວ: infor.saedalaos@gmail.com

ປິດຮັບສະໝັກ ວັນທີ **10/09/2023**